**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 3128 /ອຊ
ນະຄອນຫລວງວຽງຈັນ, ວັນທີ 25 ຕຸລາ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

**ເຖິງ: ບັນດາບໍລິສັດພາຫະນະຂົນສົ່ງ.**

**ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນຈັດຈ້າງລົດຕູ້ສໍາລັບຄະນະຜູ້ແທນ ທີ່ຈະມາເຂົ້າຮ່ວມກອງປະຊຸມໜ່ວຍງານຮ່ວມອາຊຽນ-ຈີນ ວ່າດ້ວຍການຈັດຕັ້ງປະຕິບັດຖະແຫຼງການແຫ່ງການປະພຶດ ຂອງບັນດາຝ່າຍຢູ່ທະເລຈີນໃຕ້ ຄັ້ງທີ 45 ໃນວັນທີ 27-29 ພະຈິກ 2024 ທີ່ ນະຄອນຫຼວງວຽງຈັນ.**

- ອີງຕາມການເຫັນດີຂອງ ຄະນະນໍາກະຊວງການຕ່າງປະເທດ ຄັ້ງວັນທີ 17 ຕຸລາ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີປະສົບປະການດ້ານການບໍລິການລົດຕູ້ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງ ພາຫະນະ (ລົດຕູ້) ສໍາລັບຄະນະຜູ້ແທນ 13 ຄະນະ ທີ່ຈະມາເຂົ້າຮ່ວມກອງປະຊຸມໜ່ວຍງານຮ່ວມອາຊຽນ-ຈີນ ວ່າດ້ວຍການຈັດຕັ້ງປະຕິບັດຖະແຫຼງການແຫ່ງການປະພຶດ ຂອງບັນດາຝ່າຍຢູ່ທະເລຈີນໃຕ້ ຄັ້ງທີ 45 ໃນວັນທີ 27-29 ພະຈິກ 2024 ທີ່ ນະຄອນຫຼວງວຽງຈັນ.

ການປະມູນຈະດໍາເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 28 ຕຸລາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 9:30 ໂມງ ຂອງວັນທີ 8 ພະຈິກ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 8 ພະຈິກ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

**ເຊັນແທນ ຫົວໜ້າກົມ**
**ຮອງຫົວໜ້າກົມ**

ກະຊວງການຕ່າງປະເທດ
ກົມອາຊຽນ

**ແສງພະອາທິດ ສະນຸກອນ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 3129 /ອຊ
ນະຄອນຫລວງວຽງຈັນ, ວັນທີ 25 ຕຸລາ 2024

# ເງື່ອນໄຂ ແລະ ຄໍາແນະນໍາສໍາລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້–ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້–ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນເຊົ່າພາຫະນະ (ລົດຕູ້) ສໍາລັບຄະນະຜູ້ແທນ 13 ຄະນະ ທີ່ຈະມາເຂົ້າຮ່ວມກອງປະຊຸມໜ່ວຍງານຮ່ວມອາຊຽນ-ຈີນ ວ່າດ້ວຍການຈັດຕັ້ງປະຕິບັດຖະແຫຼງການແຫ່ງການປະພຶດ ຂອງບັນດາຝ່າຍຢູ່ທະເລຈີນໃຕ້ ຄັ້ງທີ 45 ໃນວັນທີ 27-29 ພະຈິກ 2024 ທີ່ ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

**<u>ເງື່ອນໄຂທົ່ວໄປ</u>**

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດໍາເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊໍາລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023 ຫຼື 2022;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສໍາຮອງຈາກທະນາຄານ);
6. ຕ້ອງມີເງິນຄໍ້າຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ) ຫຼື ເປັນແຊັກທະນາຄານ;
7. ບໍລິສັດຕ້ອງປະສົບການດ້ານນີ້ ຢ່າງໜ້ອຍ 02 ປີ ແລະ ມີຈໍານວນລົດພຽງພໍ;
8. ບໍລິສັດຕ້ອງສະໜອງລົດຕູ້ Toyota Hiace ພ້ອມດ້ວຍຄົນຂັບລົດ ຈໍານວນ 13 ຄັນ, ລົດທຸກຄັນຕ້ອງມີປະກັນໄພຢ່າງຈະແຈ້ງ ແລະ ມີຄວາມພ້ອມເລີ່ມວຽກແຕ່ວັນທີ 25 ພະຈິກ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດໍາເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກໍານົດເງື່ອນໄຂ ແນະນໍາຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

**ເຊັນແທນ ຫົວໜ້າກົມ**
**ຮອງຫົວໜ້າກົມ**

ກະຊວງການຕ່າງປະເທດ ກົມອາຊຽນ

ແສງພະອາທິດ ສະນຸກຜົນ